ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ເລກທີ: 623/ພກພ

ນະຄອນຫຼວງວຽງຈັນ, ວັນທີ: 26 ເມສາ 2018

ຮຽນ : ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ທີ່ນັບຖື

ເລື່ອງ : ແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບວ່າດ້ວຍລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 22/LSX, ລົງວັນທີ 07 ມັງກອນ 2011.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ທີ່ໄດ້ຈັດຂຶ້ນ ໃນວັນທີ 25 ເມສາ 2018 ເວລາ **14:30** ໂມງ ຫາ **16:00** ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ຂັນທະວົງ ດາລາວົງ, ຮອງປະທານສະພາບໍລິຫານ.

ກອງປະຊຸມຄັ້ງນີ້ ມີຜູ້ເຂົ້າຮ່ວມທັງໝົດ 164 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 24 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 140 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 572.493.400 ຮຸ້ນ, ເທົ່າກັບ 98,37 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ເຊິ່ງຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບຂອງບໍລິສັດ. ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

ວາລະທີ 01. ພິຈາລະນາ ແລະ ຮັບຮອງເອົາລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2017 ແລະ
ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2017

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ: ຈຳນວນ **572.493.400** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02. ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

PK

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 6, ໂຮງແຮມວຽງຈັນ ພລາຊາ, ບ້ານຫັດສະດີ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ.
Tel/Fax: (856-21) 265 394, Email: info@phousy.com; Website: www.phousy.com

- ເຫັນດີ: ຈຳນວນ **572.493.400** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ່ 03</u>: ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງ ບໍລິສັດ 6 ເດືອນ ທ້າຍປີ 2017

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ: ຈຳນວນ **572.493.400** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ່ 04</u>: ພິຈາລະນາ ແລະ ອະນຸມັດ ການມອບອຳນາດໃຫ້ແກ່ສະພາບໍລິຫານ ພິຈາລະນາ ແລະ ອະນຸມັດຈ່າຍເງິນປັນຜົນລະຫວ່າງປີ ຂອງປີຕໍ່ໆໄປ.

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ: ຈຳນວນ **572.493.400** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ;

<u>ວາລະທີ່ 05</u>: ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ ແລະ ກຳນົດຄ່າຈ້າງ ຜູ້ກວດສອບບັນຊີພາຍນອກ ປີ 2018

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ: ຈຳນວນ **572.493.400** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ່ 06</u>: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຄົນໃໝ່ແທນຜູ້ອຳນວຍການໃຫຍ່ຄົນເກົ່າທີ່ລາອອກ

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ: ຈຳນວນ **567.493.400** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ່ 07</u>: ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງສະມາຊິກສະພາບໍລິຫານຜູ້ໃໝ່ແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກ

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ: ຈຳນວນ **572.491.400** ສຽງ ເທົ່າກັບ **99,9997** ສ່ວນຮ້ອຍ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີ: ຈຳນວນ **2.000** ສຽງ ເທົ່າກັບ **0,0004** ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ່ 08</u>: ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຄະນະກຳມະການກວດສອບ ແລະ ຄະນະກຳມະການກຳນົດຄ່າຕອບແທນ

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ: ຈຳນວນ **572.493.400** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານກອງປະຊຸມ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ສີທາ ພົມມະຈິດ